# **<u>ບາດແຜຈາກສົງຄາມໃນອະດີດ</u>**

*ໃນເດືອນສິງຫາ 2018, ຄະນະຜູ້ແທນຈາກສາທາລະນະລັດເກົາຫຼີ ແລະ ອົງການສະຫະປະຊາຊາດ ເພື່ອການພັດທະນາ ໄດ້ເດີນທາງໄປຢ້ຽມຢາມແຂວງຊຽງຂວາງ ເພື່ອຕິດຕາມຄວາມຄືບໜ້າຂອງການແກ້ໄຂບັນຫາລະເບີດບໍ່ທັນແຕກໃນ ສປປ ລາວ.*

ໃນຂະນະທີ່ຈະລົງຈອດທີ່ສະໜາມບິນຊຽງຂວາງ, ຫຼັກຖານສິ່ງເສດເຫຼືອຈາກສົງຄາມອິນດູຈີນຄັ້ງທີສອງເປັນສິ່ງທີ່ບໍ່ສາມາດເບິ່ງຂ້າມໄດ້. ຂຸມໃຫຍ່ທີ່ເກີດຈາກການຖິ້ມລະເບີດໃສ່ແຜ່ນດິນລາວຢ່າງລຽນຕິດໃນລະຫວ່າງປີ 1964 - 1973 ໄດ້ກະຈາຍຢູ່ຕາມພື້ນທີ່ຕ່າງໆ. ເຖິງແມ່ນວ່າຈະມີຮ່ອງຮອຍທີ່ເຫັນໄດ້ຊັດເຈນຕາມພື້ນທີ່ຕ່າງໆ, ສໍາລັບປະຊາຊົນລາວຫຼາຍຄົນແລ້ວ ຂຸມໃຫຍ່ເຫຼົ່ານີ້ບໍ່ໄດ້ເປັນສິ່ງເຕືອນໃຈວ່າສົງຄາມໄດ້ສິ້ນສຸດລົງແລ້ວໃນຫຼາຍທົດສະຫວັດຜ່ານມາ. ບັນດາແຂວງທີ່ລຽບຕາມຊາຍແດນ ເປັນຕົ້ນແມ່ນ ແຂວງຊຽງຂວາງ ຍັງມີສິ່ງທີ່ຕາມຫຼອກຫຼອນປະຊາຊົນ ນັ້ນກໍ່ຄື:

ລະເບີດບໍ່ທັນແຕກ, ໃນທຸກໆປີ ລະເບີດບໍ່ທັນແຕກ ໄດ້ສືບຕໍ່ເຂັ່ນຂ້າປະຊາຊົນຫຼາຍຄົນຢູ່ລາວ. ຫຼາຍຄົນໃນນັ້ນຍັງໜຸ່ມນ້ອຍເກີນໄປທີ່ຕ້ອງໄດ້ສໍາຜັດກັບສົງຄາມດ້ວຍຕົນເອງ.



ພໍ່ແຂກ ປະຊາຊົນບ້ານຕອນແຂວງຊຽງຂວາງ ຮູ້ເລື່ອງນີ້ດີກວ່າຄົນອື່ນໆ. ຄືກັບປະຊາຊົນລາວຫຼາຍຄົນທີ່ຕໍ່ສູ້ເພື່ອການດໍາລົງຊີວິດຂອງຄອບຄົວ, ລາວໄດ້ໄປເກັບເສດເຫຼັກໃນບ້ານຂອງລາວໃນວັນປົກກະຕິໃນປີ 2011. ພໍ່ແຂກໄດ້ເກັບເສດໂລຫະທີ່ເປັນໝ້ຽງທີ່ມີມູນຄ່າສອງສາມເຊັນຕາມລາຄາໃນຕະຫຼາດທ້ອງຖິ່ນ. ແຕ່ວ່າລາຄາຂອງເສດໂລຫະນີ້ໄດ້ສູງຂຶ້ນໂດຍບໍ່ສາມາດປ່ຽນແປງໄດ້ ຍ້ອນວ່າເກີດລະເບີດຂຶ້ນທີ່ມືຂອງລາວ, ລາວຕ້ອງສູນເສຍແຂນສອງເບື້ອງ ແລະ ຄວາມສາມາດໃນການລ້ຽງດູຄອບຄົວຂອງລາວ.

ຄູ່ຮ່ວມພັດທະນາຫຼາຍພາກສ່ວນທີ່ກໍາລັງເຮັດວຽກຢູ່ ສປປ ລາວ ໄດ້ໃຫ້ການສະໜັບສະໜູນການເກັບກູ້ລະເບີດບໍ່ທັນແຕກ ແລະ ຊ່ວຍຜູ້ຖືກເຄາະຮ້າຍ ຄືດັ່ງພໍ່ແຂກ. ຄະນະຜູ້ແທນປະກອບມີ ທ່ານ ຊຸງ ຊຸນ ຊົນ, ເອກອັກຄະລັດຖະທູດ ສາທາລະນະລັດເກົາຫຼີ ປະຈໍາ ສປປ ລາວ ແລະ ທ່ານນາງ ຄາຣີນາ ອິມໂມເນັນ, ຜູ້ປະສານງານອົງການສະຫະປະຊາຊາດ ທັງຜູ້ຕາງໜ້າອົງການສະຫະປະຊາຊາດ ເພື່ອການພັດທະນາ ປະຈໍາ ສປປ ລາວ ໄດ້ເດີນທາງໄປແຂວງຊຽງຂວາງ ເພື່ອຕິດຕາມຄວາມຄືບໜ້າຂອງການປະຕິບັດວຽກງານ ແລະ ຫາວິທີທາງ ເພື່ອສືບຕໍ່ການສະໜັບສະໜູນ. ນອກຈາກການປະກອບສ່ວນຢ່າງຫ້າວຫັນໃນຄວາມພະຍາຍາມແກ້ໄຂບັນຫາລະເບີດບໍ່ທັນແຕກຂອງລັດຖະບານ, ທັງອົງການກອຍກາ ແລະ ອົງການສະຫະປະຊາຊາດ ເພື່ອການພັດທະນາ ໄດ້ໃຫ້ການສະໜັບສະໜູນແຜນງານຕ່າງໆ ທີ່ຊ່ວຍເຫຼືອຜູ້ຖືກເຄາະຮ້າຍຈາກລະເບີດບໍ່ທັນແຕກ ເພື່ອໃຫ້ພວກເຂົາເຈົ້າສາມາດກັບຄືນສູ່ສັງຄົມ ແລະ ຊ່ວຍປູກຈິດສໍານຶກກ່ຽວກັບຄວາມອັນຕະລາຍຂອງລະເບີດບໍ່ທັນແຕກໃນຊຸມຊົນທີ່ມີຄວາມສ່ຽງ.

ຜູ້ຖືກເຄາະຮ້າຍຈາກລະເບີດບໍ່ທັນແຕກນອກຈາກຈະມີຄວາມທ້າທາຍທາງດ້ານຮ່າງກາຍແລ້ວ, ຄວາມເຈັບປວດທາງອາລົມ ແລະ ຄວາມອາຍສັງຄົມ ຍັງເປັນສິ່ງຫຼຸດຜ່ອນຄວາມສາມາດຂອງພວກເຂົາ ໃນການມີສ່ວນຮ່ວມກັບສັງຄົມໃກ້ຕົວຂອງພວກເຂົາ. ພໍ່

ແຂກໂຊກດີທີ່ບໍ່ໄດ້ຢູ່ຢ່າງໂດດດ່ຽວຫຼັງຈາກທີ່ເກີດໂສກນາດຕະກຳກັບລາວ. ລາວໄດ້ກ່າວວ່າ "ຫຼັງຈາກທີ່ເກີດອຸບັດຕິເຫດ, ຊາວບ້ານໄດ້ຟ້າວພາຂ້າພະເຈົ້າໄປໂຮງໝໍ ແລະ ພວກເຂົາກໍ່ໃຫ້ການຊ່ວຍເຫຼືອແກ່ຂ້າພະເຈົ້າຕັ້ງແຕ່ນັ້ນມາ".

ການທີ່ບໍ່ສາມາດລ້ຽງດູຄອບຄົວຄືກ່ອນເກີດອຸບັດຕິເຫດ ໄດ້ກາຍເປັນຄວາມທຸກທີ່ຍິ່ງໃຫຍ່ຂອງຜູ້ຖືກເຄາະຮ້າຍຈາກລະເບີດບໍ່ທັນແຕກ. ສະມາຄົມສົ່ງເສີມຄຸນນະພາບຊີວິດ ທີ່ໄດ້ຮັບການສະໜັບສະໜູນຈາກອົງການກອບກາ ໄດ້ມອບງົວສອງໂຕ, ໝູ່ສອງສາມໂຕ, ເອົາໄຟຟ້າເຂົ້າເຮືອນ ແລະ ສ້ອມແປງຫຼັງຄາເຮືອນໃຫ້ມີຄວາມແໜ້ນໜາໃຫ້ແກ່ຄອບຄົວພໍ່ແຂກ. ການຊ່ວຍເຫຼືອນີ້ຄາດວ່າຈະຊ່ວຍໃຫ້ພໍ່ແຂກຮູ້ສຶກວ່າມີຄວາມໝັ້ນຄົງດ້ານວັດຖຸ ເຊິ່ງຖືວ່າເປັນສິ່ງສຳຄັນສຳລັບລາວ ເພື່ອໃຫ້ມີຄວາມໝັ້ນໃຈໃນຕົນເອງ ແລະ ສາມາດກຸ້ມຕົນເອງໄດ້.

ໃນຂະນະທີ່ຮັບປະກັນວ່າ ຜູ້ຖືກເຄາະຮ້າຍຈາກລະເບີດບໍ່ທັນແຕກສາມາດມີສ່ວນຮ່ວມກັບສັງຄົມຢ່າງເຕັມສ່ວນ ເປັນວຽກໜຶ່ງທີ່ມີຄວາມສຳຄັນສຳລັບການພັດທະນາແບບຍືນຍົງຂອງ ສປປ ລາວ, ການຈຳກັດອຸບັດຕິເຫດຈາກລະເບີດບໍ່ທັນແຕກໃຫ້ເກີດໜ້ອຍທີ່ສຸດ ແມ່ນເປັນບຸລິມະສິດອັນດັບໜຶ່ງ. ມາຮອດປະຈຸບັນນີ້, ມີສັນຍານເກີດຂຶ້ນໃນທາງບວກ ໃນທົ່ວປະເທດ. ໃນລະຫວ່າງປີ 2008 ຫາປີ 2017, ຈຳນວນຜູ້ບາດເຈັບ ແລະ ເສຍຊີວິດຈາກລະເບີດບໍ່ທັນແຕກແມ່ນຫຼຸດລົງຫຼາຍກວ່າ 85%.



ເຖິງຢ່າງໃດກໍ່ຕາມ, ມີຜູ້ຖືກເຄາະຮ້າຍໜຶ່ງຄົນ ກໍຍັງຖືວ່າຫຼາຍເກີນໄປແລ້ວ. ຄວາມສຳເລັດທີ່ເກີດຂຶ້ນໃນຂະແໜງການລະເບີດບໍ່ທັນແຕກ ເປັນຜົນໄດ້ຮັບຂອງຄວາມພະຍາຍາມຂອງທີມງານພາກລັດ ແລະ ພາກເອກະຊົນ, ອົງການຈັດຕັ້ງທີ່ບໍ່ຫວັງຜົນກຳໄລ ແລະ ຫວັງຜົນກຳໄລ ແລະ ຂັ້ນສູນກາງ ແລະ ຂັ້ນທ້ອງຖິ່ນ. ຖ້າຈຸດປະສົງໃນການເຮັດໃຫ້ຈຳນວນການເກີດອຸບັດຕິເຫດກາຍເປັນສູນ ໄດ້ຮັບການຄຳນຶງເຖິງຢູ່ເລື້ອຍໆ, ໂຄງສ້າງທີ່ມີການແກ້ໄຂແບບມີສ່ວນຮ່ວມຈາກຫຼາຍພາກສ່ວນຕ້ອງໄດ້ຮັບການຮັກສາ ແລະ ສ້າງຄວາມເຂັ້ມແຂງ.

ດັ່ງທີ່ ທ່ານນາງ ຂັນທະລີ, ວິຊາການເກັບກູ້ລະເບີດບໍ່ທັນແຕກ ເຊິ່ງມີປະສົບການເຮັດວຽກເກືອບ 20 ປີ ໃນທີມເກັບກູ້ຍິງຂອງໂຄງການເກັບກູ້ລະເບີດແຫ່ງຊາດ ໄດ້ກ່າວຕໍ່ພວກເຮົາວ່າ: "ພວກເຮົາຕ້ອງການການສະໜັບສະໜູນແທ້ໆ ເພື່ອເກັບກູ້ລະເບີດບໍ່ທັນແຕກທັງໝົດໃຫ້ໝົດຈາກປະເທດລາວ ໄວຫຼາຍເທົ່າໃດຍິ່ງດີ. ໂດຍການຊ່ວຍເຫຼືອຈາກອົງການຈັດຕັ້ງສາກົນ, ຄວາມພະຍາຍາມນີ້ຈະສາມາດເກີດຂຶ້ນໄດ້."



ທ່ານ ນາງ ຄາຣີນາ ອິມໂມເນັນ, ຜູ້ປະສານງານອົງການສະຫະປະຊາຊາດ ທັງເປັນຜູ້ຕາງໜ້າອົງການສະຫະປະຊາຊາດ ເພື່ອການພັດທະນາ ປະຈຳ ສປປ ລາວ, ເຫັນດີວ່າ ຄູ່ຮ່ວມພັດທະນາຫຼາຍໆພາກສ່ວນ ແລະ ອົງການສະຫະປະຊາຊາດ ເພື່ອການພັດທະນາ ໄດ້ສືບຕໍ່ເຮັດວຽກຮ່ວມກັນໂດຍການຮ່ວມມືກັບພາກສ່ວນຕ່າງໆຂອງລັດ ໃນການແກ້ໄຂສິ່ງທ້າທາຍນີ້. ທ່ານ ໄດ້ກ່າວວ່າ "ເປັນໜ້າທີ່ຂອງພວກເຮົາທີ່ຈະຕ້ອງປຸກຈິດສຳນຶກກ່ຽວກັບບັນລະເບີດບໍ່ທັນແຕກຂອງ ສປປ ລາວ ໃຫ້ສາກົນໄດ້ຮັບຮູ້ ແລະ ລວບລວມການສະໜັບສະໜູນ ສຳລັບຂະແໜງການລະເບີດບໍ່ທັນແຕກ ໃນຂະນະທີ່ທີມປະຕິບັດງານເກັບກູ້ ທີ່

ກ້າຫານທັງຍິງ ແລະ ຊາຍ ສືບຕໍ່ສ່ຽງຊີວິດໃນແຕ່ລະມື້ ເພື່ອເກັບກູ້ລະເບີດບໍ່ທັນແຕກເພື່ອໃຫ້ອະນາຄົດມີຄວາມປອດໄພຈາກລະເບີດບໍ່ທັນແຕກ. ອະນາຄົດທີ່ຍືນຍົງຂອງປະເທດຂຶ້ນກັບບັນຫາດັ່ງກ່າວ ເພື່ອແນໃສ່ບັນລຸເປົ້າໝາຍການພັດທະນາແບບຍືນຍົງແຫ່ງຊາດ ທີ 18: ຊີວິດທີ່ປອດໄພ ຈາກລະເບີດບໍ່ທັນແຕກ.”

***ສຳລັບຂໍ້ມູນເພີ່ມຕື່ມ, ກະລຸນາຕິດຕໍ່:***

ທ່ານ Olivier Bauduin, ຫົວໜ້າທີ່ປຶກສາດ້ານວິຊາການ / ຫົວໜ້າໜ່ວຍງານລະເບີດບໍ່ທັນແຕກ
ອົງການສະຫະປະຊາຊາດ ເພື່ອການພັດທະນາ
olivier.bauduin@undp.org;